ການເມືອງການປົກຄອງຣະບອບປະຊາທິປະໄຕ
ຂອງພັກປະຊາຊົນລາວອິສຣະຍຸກໃໝ່ໃນທັມມະ

<u>ຄິດຄົ້ນທາງການເມືອງ</u>

ຣະບອບປະຊາທິປະໄຕຂອງພັກປະຊາຊົຂລາວອິສຣະໃໝ່ນີ້ສ້າງຂື້ນຄັ້ງວັນທີ-25-5-00 ຂໍເຜີຍແຜ່ໃຫ້ຊາວລາວທາງໃນປະເທດແລະຕ່າງປະເທດທົ່ວໂລກ ໃຫ້ໄດ້ເຂົ້າໃຈເຖິງເນື້ອໃນໃຈຄວາມ ແລະຈຸດໝາຍປາຍທາງຂອງພັກປະຊາຊົນລາວອິສຣະໃໝ່ໃນທັມມະ ຕາມຄວາມເປັນຈິງໃນເມືອງລາວກໍ່ເຄີຍຖືກັນມາແລ້ວສອງຣະບອບ ຄື ຣະບອບສັກດີນາແລະຣະບອບສັງຄົມນິຍົມຂອງວຽດນາມປັດຈຸບັນ-ການທຽບເທົ້າທັງສອງຣະບອບກໍ່ມີຜົນປະໂຍດໃຫ້ແກ່ປະເທດລາວເປັນບາງຢ່າງ ແຕ່ກໍ່ບໍ່ຖືກກັບຈິດໃຈຂອງປະຊາຊົນລາວດີພໍ ເພາະວ່າສະພາບການຂອງທັງສອງຣະບອບ ບໍ່ຮູ້ເລີຍວ່າຈຸດໝາຍປາຍທາງນັ້ນຢູ່ໃສ ສ້າງປະເທດເພື່ອຫຍັງ-ຄວາມຈະເຣີນຢູ່ທີ່ໃດແລະບໍ່ມີໃຜຮູ້ເພາະປົກຄອງກັນຕາມຣະບອບຕ່າງປະເທດ ໂດຽບໍ່ແມ່ນຣະບອບຂອງຕົວເອງ ສະນັ້ນເປັນຄື ຫອຽລອຍ ນຳຄອງຄາດ ຣະບອບທີ່ຖືກໃຈຂອງປະຊາຊົນລາວກໍ່ຄື ຣະບອບທີ່ມີສິນທັມ

<u>ການປົກຄອງຂອງຣະບອບຕ່າງປະເທດໃນເມືອງລາວ ກໍ່ມີການປ່ຽນແປງ</u>ທຸກໆ 30-ປີ ພວກເຮົາຂໍຈົ່ງເບິ່ງສະພາບທີ່ຜ່ານມາ ຈະໄດ້ກ່າວຕໍ່ໄປນີ້ ຄືໃນປີ-1914 ຫາ 1918-ສົງຄາມໂລກຄັ້ງທີ-1-ລາວເຮົາເປັນຫົວເມືອງຂື້ນຂອງຝຣັ່ງເສສແລ້ວ-30-ປີຕໍ່ມາ ຫາປີ-1939-ຫາ-1945-ສົງຄາມໂລກຄັ້ງທີ-2-ພອມທັງສົງຄາມອິນໂດຈີນ ລາວເສັຽຈຳປາສັກແລະປາກລາຍ ໃຫ້ໄທແລະຍີ່ປຸ່ນເຂົ້າຍຶດຄອງອິນໂດຈີນ-30-ປີຕໍ່ມາຫາປີ-1945-1975-ອາເມຣິກາເສັຽສົງຄາມວຽດນາມ-ລາວເປັນຄອມມຸນິສແກວ ແລະ-30-ປີຕໍ່ໄປນີ້ ຄື ເລີ້ມຕົ້ນແຕ່ປີ-2008-09-ຂື້ນໄປເມືອງລາວອາດຈະມີການປ່ຽນແປງໄປສູ່ຣະບອບໄດຣະບອບນຶ່ງ ແຕ່ແນ່ໃຈວ່າປະຊາຊົນລາວມັກໃນຄວາມຍຸຕິທັມແລະບໍ່ມັກເປັນທາດຮັບໃຊ້ຂອງຄົນຕ່າງຊາດ ອາດຈະຕ້ອງແມ່ນເປັນຣະບອບຂອງພັກປະຊາຊົນລາວອິສຣະໃໝ່ໃນທັມມະປະຊາທິປະໄຕ ຈະເປັນຣະບອບສຸດທ້າຍ ໃນການປົກຄອງປະເທດລາວແລະປະຊາຊົນລາວໃຫ້ມີຄວາມຈະເຣີນຮຸ່ງເຮືອງໄປຕາມຍຸກຕາມສມັຍ ຂອງສິບຍຸກຄື-ຍຸກຍຸທການ-ພານຍັກ-ຮັກມິດ-ສມິສທັມ ຈຳແຂນຂາດ ຣາຊ ໂຈນ-ຊົນຣອ້ງທຸກ-ຍຸກທະມິນ-ຖິ່ນກາຂາວ-ລາວສີວິໄລ ແຕ່ຣະຍຸກນີ-20 ປີບໍ່ນັບຍຸກສຸດທ້າຍ ຄືຍຸກລາວສີວິໄລ ຍຸກນີ້ຈະ ຈະເຣີນໄປຕຣອດ

ເຖິງຂັ້ນສຸດຂີດ ກົງລໍ້ປະວັດສາດຂອງເມືອງລາວຈະບໍ່ໂງ້ງຄືນມາອີກຈົ່ນກົ່ວເມືອງລາວ
ຈະພົບຄວາມຍຸຕິທັມແລະຄວາມສີວິໄລ ຈາກຣະບອບໃໝ່ໃນທັມມະປະຊາທິປະໄຕ
ສວັນຈະບໍ່ຊ່ວຍຄົນທີ່ບໍ່ເຮັດຫຍັງເລີຍປ່ຳຄອງຄອຍຄວາມຫວັງໂດຍທີ່ບໍ່ໄດ້ເຮັດ
ຫຍັງ ຂໍທ່ານຈົ່ງຊ່ວຍກັນຮີບຮ້ອນໃຈໃຫ້ທັນກັບສະພາບການກະຣຸນາຍປ່ານອນ
ຫລັບທັບສິດພວກເຮົາຕອ້ງຕໍ່ສູ້ເພື່ອຄວາມເປັນທັມແລະໃຫ້ຢູ່ໃນທັມມະ

<u>ສິນທັມຕອ້ງຊະນະອະທັມ</u>

<u>ການເມືອງການປົກຄອງຂອງພັກປະຊາຊົນລາວອິສຣະ</u>

<u>ເພື່ອປະຊາທິປະໄຕຢ່າງແທ້ຈິງນີ້ ມີດັ່ງນີ້</u>

ກາບຣຽນເຖິງພີ່ນອ້ງລາວ -ທາງພັກປະຊາຊົນລາວອິສຣະ -ຊຶ່ງໄດ້ເປັນຄົນລາວຜູ້ນຶ່ງ
ທີ່ມີນ້ຳໃຈຮັກຊາດຮັກຄວາມເປັນທັມ ຮັກຄວາມເປັນລາວແລະມີນ້ຳໃຈສູງສົ່ງ ສົມເປັນ
ຜູ້ນຶ່ງໄດ້ນຳເອົາທິສດີຫຼືຄຳສອນຂອງອົງພຣະສັມມາສັມພຸທເຈົ້າຊຶ່ງເປັນພຣະສາສດາ
ອາຈານເອກຂອງໂລກ ເພື່ອນຳໄປເປັນທິສດີແລະພາກປະຕິບັດເຂົ້າໄປໝູນໃຊ້ໃນການ
ປົກຄອງປະເທດລາວໃຫ້ກາຍເປັນແຜ່ນດິນທັມ ນຳໝູ່ຊາວລາວໄປສູ່ຄວາມສງົບສຸກ
ເຖິງນາທີສຸດທ້າຍແລ້ວ ທີ່ພວກເຮົາຈະສະຣະເວລາແລະສະຣະເຮື່ອແຮງເຂົ້າປະກອບ
ສ່ວນຮັບໄຊ້ຣະບອບຂອງລາວໃນທັມມະປະຊາທິປະໄຕເພື່ອປົດແອກເດັກອອກຈາກຄໍ
ໃຫ້ປະຊາຊົນໄປເປັນຣະບອບປະຊາທິປະໄຕທົ່ວປະເທດຢ່າງເປັນທັມ ປະເທດລາວເປັນ
ປະເທດທີ່ດອ້ຍພັທນາແລະລ້າຫລັງ ທາງດ້ານວັດຖຸແລະຈິຕໃຈກໍ່ຍອ້ນພວກເຮົາໄດ້ຖືກ
ແຊກແຊງ ກົດຂີ່ຂົ່ມເຫງຈາກຈັກພັດປ່າເຖື່ອນອອມຂ້າງຂອງທອ້ງຖິ່ນແລະຕ່າງ
ດ້າວອື່ນໆ ມານານແສນນານຢ່າງເວີຍຄໍບໍ່ຂື້ນ

ມາຮອດປະຈຸບັນນີ້ທ່ານຮູ້ບໍ່ວ່າ ປະເທດລາວເຮົາກຳລັງດີ້ນຕາຍຈະກາຍໄປ
ເປັນຂອງຕ່າງຊາດຢ່າງບໍ່ຄາດຝັນ ໃນທ່າມກາງປະເທດຈະຕາຍຢູ່ນີ້ ມີທັງຄວາມ
ຊື່ນຊົມແລະຂົມຂື່ນຂອງປະຊາຊົນ ຜູ້ຊື່ນຊົມກໍ່ໄດ້ແກ່ຜູ້ມີຢູ່ມີກິນເພັ້ນກະດູກສັນຫລັງ
ຂອງຊາດຄື ສໍ້ກົງນັ້ນເອງ ຜູ້ຂົມຂື່ນກໍ່ໄດ້ແກ່ປະຊາຊົນຄົນທຸກຍາກລຳບາກທີ່ຫາເຊົ້າ
ກິນຄ່ຳ ທຳງານເຮັດໄຮ່ໃສ່ນາຫາກິນຊອບທັມນັ້ນເອງ ຄວາມຂັດແຍ່ງຣະວ່າງຜູ້ຊື່ນ
ຊົມແລະຂົມຂື່ນທັງສອງ ຈຶ່ງມີການຂ້າຟັນຮັດແທງ ແຊງດີແຊງເດັ່ນກັນແລະແບ່ງ
ແຍກພັກພວກອອກເປັນຫລາຍກຸ່ມມານານແລ້ວ ເພາະພວກເຮົາບໍ່ລົງລອຍກັນໃຜກໍ່
ວ່າມັນສັນຕິພາບເລີຍເປັນໄມ້ຄອ້ນມາໂງເຂົ້າໃສ່ຫົວບໍ່ມີເຫດຜົນ ເພາະຕ່າງຄົນ
ຕ່າງກໍ່ເບ່ງຣັສມີຂອງຄວາມອາຫັງກາບໍ່ເຂົ້າໃຈກັນ ຍອ້ນຣະດັບຈິດໃຈ

ບໍ່ສູງສົ່ງ ຈຶ່ງຖືກຊາດອື່ນຢຸແຍ່ດ້ວຍເລ້ຫລ່ຽມ ຫວັງກືນກິນຊາດລາວທັງດຸ່ມທັງເທິງ ດັ່ງນັ້ນຄວາມອ່ອນແອກໍ່ຣົດນ້ອຍຖອຍລົງຕາມລໍາດັບສັດຕຣູພາຍນອກກໍ່ແຊກແຊງດິນດອນຕອນຫຍ້າກໍ່ຖືກຍຶດຄອງ ຈາກຕ່າງດ້າວທຸກດ້ານ ປະຊາຊົນນັບມື້ທຸກຍາກລໍາບາກ ຂາດແຄນເຂົ້າປາອາຫານ ຂາດສິດທິມະນຸດຍ້ອນທັມຕີນຊ້າງຢຽບປາກນົກຢຽບທັງປາກຢຽບທັງດັງຢຽບທັງຫ້ອງຈົ່ນພີ່ນ້ອງຫ່າງໄກກັນ ຍ້ອນພວກເຮົາຂາດຄວາມມີສະຕິຣະວັງຕົວ ຂາດຄວາມຮັກແພງແລະປຸ້ມລຸມກັນສາມະຄີປອງດອງຂາດຄວາມຮັກຊາດ ຍອມເປັນທາດຕ່າງດ້າວ ຂາດຄວາມເປັນລາວແລະເຫັນແກ່ຕົວເມົາມົວບໍາແຕ່ຍົດຖາບັນດາສັກ ບໍ່ມີຄວາມສາມາດກ້າຫານກ້ຳເກິ່ງກັນຜູ້ນໍາກໍ່ຂາດຄວາມມີສີນທັມປະຈໍາໃຈ ຄອຍຂູດເນື້ອເຖືອໜັງປະຊາຊົນກິນໄປວັນໆ ແລະເຣັດນາໃສ່ຫລັງປະຊາຊົນ ຜູ້ກິນກໍ່ກິນພໍຮາກຜູ້ຢາກກໍ່ຢາກພໍຕາຍບໍ່ເບິ່ງບໍ່ແຍງປະຊາຊົນໃຫ້ທົ່ວເຖິງ ແລະກໍ່ບໍ່ໄດ້ສົນໃຈວ່າຈະທຸກຫຼືຍາກ ຣັຖບານຍຸກໄດກໍ່ປ່ອຍປະຣະເລີຍ ໄປຕາມຍະຖາກັມຕາມມີຕາມເກີດ ຢ່າງໜ້າສົມເພດເວທນາ ປະຊາຊົນທົ່ວປະເທດກໍ່ປຽບສະເໝືອນ ປາກາງທີບໜີບຕາງທັງສັດຕຣູພາຍນອກແລະພາຍໃນ-ໃນສັດຕຣູພາຍໃນນັ້ນໄດ້ແກ່ລາວຂ້າລາວນັ້ນເອງ ຄົນດີທີ່ມີສີນທັມກໍ່ພາກັນເອົາໄປຂ້າຖິ້ມເປີດ ຖ້າຫາກມີການຝ່າຝືນຕ້ານທານນະໂຍບາຍແລະແນວຄິດລ້າຫລັງຂອງກຸ່ມກໍາອໍານາດປ່າເຖື່ອນ ສ່ວນສັດຕຣູພາຍນອກໄດ້ແກ່ການແຊກແຊງຈາກຕ່າງດ້າວ ຄືເສຖກິດເຖື່ອນການລົບລ້າງຮີດຄອງປະເພນີ ການຂຍາຍສົງຄາມໄຕ້ດິນແບບໃໝ່ຂອງຕ່າງດ້າວໃນລາວເພີ້ມຂື້ນຫວັງກືນກິນລາວດ້ວຍການສືບພັນນັ້ນເອງ ທຸກໆທົ່ວເມືອງລາວນ້ອຍໃຫ່ຽພ້ອມທັງດິນດອນຕອນຫຍ້າກໍ່ຖືກຂາຍໃຫ້ນາຍທຶນໜ້າເລືອດ ຍ້ອນຄວາມທຸກຈົນຂອງປະຊາຊົນແລະລາວຜູ້ສລາດນ້ອຍທັງຫລາຍກໍ່ພາກັນຫອບສັງຂານໄປຢູ່ບ້ານນອກຍອມສະຣະໜ້າທີ່ການງານອັນສໍາຄັນ ໃຫ້ຕ່າງດ້າວຄວບຄຸມທຸກດ້ານ ບໍ່ວ່າດ້ານການເມືອງດ້ານເສຖກິດ ສັງຄົມແລະວັທນະທັມອື່ນໆກໍ່ຖືກແຊກແຊງໂດຍທາງລັບແລະທາງກົງ ປະຊາຊົນລາວເຮົາເຮັດຫຍັງບໍ່ໄດ້ ພຽງແຕ່ອົມແຄ້ນຂັ້ງຢູ່ໃນໃຈ ເພາະຫຸ່ນຂອງຕ່າງດ້າວຖ້ວມຕໍນັ້ນເອງ

ພໍ່ແມ່ພີ່ນ້ອງຊາວລາວ ທີ່ເຄົາຣົບແລະຮັກແພງທັງຫລາຍ ພວກເຮົາຈະປ່ອຍປະຣະເລີຍຕຣອດໄປຢ່າງນີ້ບໍ່ ພວກເຮົາຈະບໍ່ເອັນດູກູນາຮັກຄົນລາວຕາດໍາໆຄືກັນແດ່ ບໍ່ນໍ-ຍາມໃດກໍ່ຈະປ່ອຍໃຫ້ຕ່າງຊາດມາຢຽບຢໍ່າກຽດແລະສັກສີຂອງລາວຕຣອດ ໂດຍບໍ່ມີໃຜຊິຫວນຄໍານຶງເຖິງ ຄວາມເປັນລາວນໍາກັນແດ່ບໍ່-ບໍ່ວ່າລາວຕາວັນອອກ ສິບສອງຈຸໄຕ-ເມືອງແຖງ-ບ້ານເຈົ້າລາວກາຍ-ເຊີນລາດຽນບຽນຟູ

ລາວຕາວັນຕົກ ອີສານ -ລ້ານນາຊຽງໃໝ່-ລາວຊຽງຕຸງໃນລັດສານພະມ້າ-ລາວເໜືອ
ສິບສອງພັນນາລື້ໃນມົນທົນຢຸນນານແລະລາວໄຕ້ກະແຈຊຽງແຕງ ພີ່ນ້ອງລາວຂອງພວກ
ເຮົາທຸກໆເຂດແຄວັນ ທີ່ໄດ້ກ່ອນມານີ້ຖືກພວກກຳອຳນາດປ່າເຖື່ອນທ້ອງຖິ່ນທໍຣະມານ
ດວ້ຍຄວາມເຈັບແສບສາຫັດແລະໄດ້ກົ້ມໜ້າໝອມຫົວເປັນຂີ້ຂ້າຮັບໃຊ້ຕ່າງດ້ວທຸກໆ
ກໍຣະນີ-ພີ່ນ້ອງລາວທັງຫລາຍເອີຍ ເລົ່ານັ້ນກໍ່ຍັງຄອງຄອຍຈາກການປົດແອກເດັກອອກ
ຈາກຄໍປະຊາຊົນແລະໄດ້ຊອກຫາຄວາມຊວ່ຍເຫລືອອັນມີສິນທັມ ຈາກແຜ່ນດິນແມ່ຢູ່
ຄື-ລາວນັ້ນເອງ ປະເທດລາວເປັນຂອງຄົນລາວໝົດທຸກຄົນ ໂດຍບໍ່ມີການແບ່ງແຍກ
ພວກເຮົາມີສິດຢູ່ໄດ້ເໝືອນກັນທຸກຄົນບໍ່ມີໃຜຈະມາກີດກັ້ນພວກເຮົາມີສິດແກ່ໄຂຊວ່ຍກັນ
ບໍ່ວ່າໃນກໍຣະນີໃດໆ ຕອ້ງປົດແອກເດັກອອກຈາກຄໍຄົນລາວໃຫ້ໄດ້

<u>ພັກປະຊາຊົນລາວອິສຣະເພື່ອປະຊາທິປະໄຕຍຸກໃໝ່ໃນທັມມະ</u>

ການເມືອງການປົກຄອງຂອງພັກປະຊາຊົນລາວອິສຣະໃໝ່ເພື່ອປະຊາທິປະໄຕມີດັ່ງນີ້

1-ມີສິນທັມ -ພວກເຮົາຕອ້ງມີສິນທັມປະຈຳໃຈ ຂອງແຕ່ຣະບຸກຄົນບໍ່ວ່າຈະແມ່ນຊົນຊາດ
ໄດຊົນເຜົ່າໄດ ແລະທຸກເພດທຸກໄວຄວນອອ່ນນອ້ມຖອມຕົນເວົ້າຈາອອ່ນຫວານໃຫ້ມີຈິດ
ໃຈເຢືອກເຢັນສຸກຂຸມລຸ່ມເລິກ ມີຄຸນສົມບັດອັນດີມີກິຣິຍາມາຣະຍາດຮຽບຮອ້ຍແລ້ວໃຫ້
ຮູ້ຈັກບຸນຄຸນ ເຄົາຣົບນັບຖືຜູ້ເປັນບິດາມານດາ ຄູບາອາຈານແລະເພື້ອນມະນຸດດວ້ຍກັນ
ໃຫ້ມີຄວາມຊື່ສັດສຸຈຣິດຕໍ່ກັນແລະກັນ ໃຫ້ມີຄວາມເມດຕາປານີ ຮັກໄຄ່ຕໍ່ທຸກໆຊີວິດໃນ
ໂລກ ໃຫ້ມີຄວາມຮັກຊາດສລາດເປັນທັມ ບໍ່ຖືຍົດຖາບັນດາສັກໄດໆ ແລະບໍ່ມີຄວາມ
ອິດສາຣິສຍາບັງບຽດ ໃຫ້ມີແຕ່ຄວາມດີມີການໃຫ້ອະໂຫສິກັມຊຶ່ງກັນແລະກັນ ອັນຈະ
ນຳພາຄວາມສງົບສຸກມາສູ່ໂລກນີ້ ຕາມເສັ້ນທາງມັດຊິມາປະທິປະທາ ຄືທາງສາຍກາງ
ບໍ່ເຄັ່ງບໍ່ຍານຈົ່ນເກີນໄປແລະບໍ່ຢ້ານຈົ່ນເກີນໄປ ຢ່າງຖືກຕອ້ງແລະເປັນທັມ

(ຄຳອະທິບາຍ)ການສ້າງສາປະເທດຕອ້ງສ້າງຄົນໃຫ້ເປັນຄົນດີໃຫ້ມີສິນທັມກອ່ນຈຶ່ງເລືອກ
ເອົາຄົນດີມີສິນ ມາປົກຄອງປະເທດເພື່ອໃຫ້ປະເທດຊາດບ້ານເມືອງ ມີຄວາມຈະເຣີນຮຸ່ງ
ເຮືອງ ບໍ່ວ່າທາງດ້ານວັດຖຸແລະຈິດໃຈກໍ່ໃຫ້ຈະເຣີນໄປພອ້ມໆກັນ -ປະຊາຊົນກໍ່ມີແຕ່ຄວາມ
ສຸກສົມຫວັງໃນຊີວິດບໍ່ຄິດຢາກຈະຂ້າຟັນຣັດແຫງແຊງດີແຊງເດ່ນກັນ ເພາະທຸກຄົນມີສິນ
ທັມປະຈຳໃຈຈຶ່ງຈະພາໃຫ້ໂລກນີ້ແຈ່ມໃສໄປຊົ່ວກາຣະນານການສ້າງສາປະເທດບໍ່ແມ່ນຈະ
ສ້າງແຕ່ວັດຖຸຢ່າງດຽວ ພວກເຮົາຕອ້ງສ້າງຈິດໃຈນຳ ຄືສ້າງຄົນໃຫ້ເປັນມະນຸດ

2-ມີຄວາມຍຸຕິທັມ -ພວກເຮົາຄວນມີຄວາມຍຸຕິທັມຕໍ່ກັນແລະກັນໃນການປົກຄອງຊາດບໍ່
ວ່າຈະແມ່ນຊົນຊາດໄດຊົນເຜົ່າໄດແລະທຸກເພດທຸກໄວຄວນມີຄວາມຊື່ສັດ

ສຸຈຣິດຕໍ່ໜ້າທີ່ການງານ -ບໍ່ໃຫ້ມີການສໍ້ຣາຊບັງຫລວງແລະບໍ່ໃຫ້ມີການສໍ້ຫລວງບັງ
ຣາຊໄປຍາດອຳນາດອອກຈາກປະຊາຊົນແລະບໍ່ໃຫ້ເຫັນແກ່ຕົນບໍ່ໃຫ້ເຫັນແກ່ຍາດພີ່ນ້ອງ
ເພື່ອນມິດສະຫາຍບໍ່ມີການຫລິ້ນພັກຫລິ້ນພວກບໍ່ມີການຫລິ້ນສິນບົນຊື້ຈ້າງຈອບອອ່ຍ
ບໍ່ອຽງຊ້າຍບໍ່ອຽງຂວາ ບໍ່ວ່າຈະຢູ່ໃນ ໂຮງສານດ້ານການຕັດສິນຄະດີຄວາມໃນທຸກຣະ
ດັບຂັ້ນບໍ່ວ່າຈະຢູ່ໃນກະຊວງທະບວງກົມຕ່າງໆ ແລະສະຖານອື່ນໆໃນສັງຄົມ ເຮົາຕ້ອງ
ມີຄວາມຍຸຕິທັມປະຈຳໃຈຕໍ່ກັນແລະກັນ ຢ່າງຖືກຕ້ອງແລະເປັນທັມ
(ຄຳອະທິບາຍ) ໃນການປົກຄອງປະເທດຫາກມີການສໍ້ໂກງກິນສິນບົນມີແຕ່ຄວາມເຫັນ
ແກ່ຕົວບໍ່ເຫັນແກ່ປະເທດຊາດບ້ານເມືອງຫຼືປະຊາຊົນ -ປະເທດຊາດກໍ່ມີແຕ່ຄວາມທຸກ
ຈົນລ້າຫລັງແລ້ວຖືກຊາດອື່ນດູມິ່ນປະໝາດເປັນການອັບອາຍຂາຍໜ້າຕໍ່ຊາວ ໂລກ
ປຽບສະເໝືອນຄົນລາວເຮົາບໍ່ມີຫົວໃຈບໍ່ມີສະຕິປັນຍາສ້າງສາປະເທດຂອງຕົນຍາມ
ໃດກໍ່ຈະຄອງຄອຍຖ້າແຕ່ຊາດອື່ນຊ່ວຍແກ້ໄຂ ແຕ່ຕົນເປັນທີ່ເພິ່ງຂອງຕົນຢູ່ທີ່ໃດ
(ອັຕະຫິອັຕະ ໂນນາ ໂຖ) ເຮົາຕ້ອງເປັນຄົນເພິ່ງຕົນເອງເລີກການສໍ້ໂກງເສັຽ
3 -ມີມະນຸສທັມ -ພວກເຮົາຕ້ອງມີມະນຸສທັມປະຈຳໃຈຂອງໃຜລາວ -ບໍ່ວ່າຈະແມ່ນ
ຊົນຊາດໃດ -ຊົນເຜົ່າໃດ ແລະທຸກເພດທຸກໄວເຮົາຄວນມີນ້ຳໃຈຮັກເຫາະແລະເຄົາຣົບ
ນັບຖືສິດທິເພື້ອນມະນຸດດ້ວຍກັນ -ເພາະພວກເຮົາເກີດມາເປັນມະນຸດຫຼືວ່າເປັນຄົນລາວ
ຄືກັນ ກໍ່ມີຮູບຮ່າງລັກສະນະຄ້າຍຄືກັນ -ມີຫູ -ມີຕາ -ມີດັງ -ມີລີ້ນ -ມີກາຍ -ມີໃຈແລະມັນ
ສມອງ ພວກເຮົາກໍ່ຍັງຢູ່ຮ່ວມ ໂລກດຽວກັນອີກດ້ວຍ ສິ່ງທີ່ດີຫຼືຊົ່ວຜິດຫຼືຖືກພວກເຮົາ
ຄວນພິນິດພິຈາຣະນາຜ່ອນສັ້ນຜ່ອນຍາວແລະໃຫ້ອະ ໂຫສິກັມໃຫ້ກັນພວກເຮົາບໍ່ຄວນ
ໃຊ້ອຳນາດປ່າເຖື່ອນຜເດັດການຈົ່ນເກີນເຫດຕໍ່ມະນຸດດ້ວຍກັນພວກເຮົາຄວນເຊື່ອ
ຟັງໃນສິ່ງທີ່ດີມີເຫດຜົນ -ບໍ່ມີການຂູດຣີດບີບບີ້ຂົ່ມຂູ່ຂົ່ມເຫັງແລະແຕະຕ້ອງຮ່າງກາຍ
ກັນຈົ່ນເລືອດຕົກຢາງອອກ -ບໍ່ວ່າໃນກໍຣະນີໃດໆພວກເຮົາຄວນຣະນຶກເຖິງສັນຊາດ
ແລະວິນຍານ -ຂອງຄວາມເປັນມະນຸສດ້ວຍກັນແລະມີມະນຸສສະທັມ
ຕໍ່ກັນແລະກັນຢ່າງຖືກຕ້ອງແລະເປັນທັມ
( -ຄຳອະທິບາຍ -) ມະນຸດເຮົາມີສີ່ຢ່າງດ້ວຍກັນ ຄື -1 -ມະນຸສສະມະນຸສ ໂສ -ນັ້ນຄືກາຍ
ເປັນມະນຸດແລະໃຈກໍ່ເປັນມະນຸດ -2 -ມະນຸດສະເດັຽຣັສ ໂນນັ້ນ ຄືກາຍເປັນມະນຸດ
ແລະໃຈເປັນສັດເດັຽຣະສານ -3 -ມະນຸດສະເຖ ໂວນັ້ນ ຄືກາຍເປັນມະນຸດແລະໃຈ
ເປັນເທວະດາ -4 -ມະນຸດສະເປ ໂຕນັ້ນ ຄືກາຍເປັນມະນຸດແລະໃຈເປັນເຜດເປັນ
ມານ ເຖິງຢ່າງໃດກໍ່ຕາມ ຄົນເຮົາເກີດມາຕ່າງກັນທີ່ຊາດທີ່ເຜົ່າພັນ

ແລະພາສານອກເໜືອກວ່ານັ້ນບໍ່ມີ ທ່ານລອງຟັງສຽງຮ້ອງໃຫ້ຫຼືຫົວເລາະຂອງຄົນເບິ່ງດຸ ແລະການຫລັບນອນຫຼືຢູ່ກິນ ກໍ່ບໍ່ຜິດແປກກັນແມ່ນແຕ່ໜອຍດຽວເລີຍ ແຕ່ເປັນຫຍັງມະນຸດເຮົາຈຶ່ງຕອ້ງມີການອິດສາຣິສຍາຄອຍບຽດບຽນຊຶ່ງກັນແລະກັນແລະຫາຜົນປະໂຍດຈາກການປະຫັດປະຫານກັນ ບໍ່ມີເລີຍພວກເຮົາບໍ່ຮູ້ຮັກມະນຸດດວ້ຍກັນ ພວກເຮົາຈະຄອຍຮັກໃຜອີກ ແຕ່ສັດເດັຽຣະສານມັນຍັງຮູ້ຮັກກັນເໝືອນໄກ່ແມ່ລູກອອ່ນນັ້ນເລ່

4 - ມີມະນຸດສັມພັນ -ພວກເຮົາຕອ້ງມີມະນຸດສັມພັນປະຈຳໃຈບໍ່ວ່າຈະແມ່ນຊົນຊາດໃດຊົນເຜົ່າໃດ ແລະທຸກເພດທຸກໄວ -ພວກເຮົາທຸກຄົນຄວນເປັນມິດກັນແລະເປັນມິດກັນທຸກໆປະເທດໃນໂລກ ບໍ່ວ່າຈະເປັນປະເທດທີ່ຖືຣະບອບຄອມມຸນິສຣະບອບເສຣີນິຍົມແລະຣະບອບຮວ່ມກຸ່ມ ພວກເຮົາຕອ້ງຜູກສາຍສຳພັນເປັນມິດທີ່ດີໂດຍທາງການ -ມີການຕິດຕໍ່ລົງທຶນຄ້າຂາຍຮວ່ມກັນ -ມີການຮວ່ມມືໃນການສາ້ງສາພັທນາປະເທດຊາດ - ໂດຍບໍ່ມີເງື່ອນໄຂ ແລະຂໍ້ຜູກມັດໃດໆຈົນເກີນໄປ ໃຫ້ມີການໄປມາຫາສູ່ກັນຖານເປັນມະນຸດຮວ່ມໂລກ ພວກເຮົາຄວນເຄົາຣົບນັບຖື ສັດຈະວາຈາທີ່ມີຕໍ່ກັນຢາ່ງຖືກຕອ້ງແລະເປັນທັມ

(ຄຳອະທິບາຍ)ມະນຸດເຮົາຖາ້ບໍ່ມີການພົວພັນຕິດຕໍ່ກັນ -ກໍ່ຄືຄວາມເມີນເສີຍແລະບໍ່ເຂົ້າໃຈກັນ ເປັນມິດກັນບໍ່ໄດ້ -ຜົນສຸດທາ້ຍກໍ່ມີການທະເລາະວິວາດກັນທຳສົງຄາມແບ່ງແຍກຕາ່ງຄົນຕາ່ງສະແດງຄວາມຍິ່ງໃຫ່ຽໃວ້ກຽດບໍ່ລົດຖົດຖີມານະເບ່ງຣັສມີ -ຂອງຄວາມອາຫັງກາທາ້ທາຍຕໍ່ເພື້ອນມະນຸດ ໂດຍບໍ່ມີສິນທັມຕິດຕົວ -ສະນັ້ນພວກເຮົາຈຶ່ງມີການຕິດຕໍ່ພົວພັນ ເຂົ້າໃຈມິດກັນກັບທຸກໆຄົນແລະທຸກໆປະເທດໃນໂລກ

5 -ມີເສຣີພາບ -ພວກເຮົາຕອ້ງມີສິດເສຣີພາບທຽບເທົ່າກັນ ບໍ່ວ່າຈະແມ່ນຊົນຊາດໃດຊົນເຜົ່າໃດແລະທຸກເພດທຸກໃວ ຈະເປັນຣະບົບການເມືອງເສຖກິດ -ສັງຄົມແລະວັທນະທັມເຮົາຄວນຖື ຄື

(1)ໃຫ້ມີສິດທີໃນການປາກເວົ້າ( 2)ໃຫ້ມີສິດທີໃນການເລືອກຕັ້ງ(3)ໃຫ້ມີສິດທີໃນການຮັບສມັກເລືອກຕັ້ງ(4)ໃຫ້ມີສິດທີໃນການເປັນເຈົ້າຂອງ ຂອງຕົນເອງ(5)ໃຫ້ມີສິດທີໃນການເປັນເຈົ້າຂອງຊັບສົມບັດ(6)ໃຫ້ມີສິດທີລົງທຶນຄາ້ຂາຍຕາ່ງໆຢາ່ງຖືກຕອ້ງ(7)ໃຫ້ມີສິດທີໃນການ ປະດິດຄິດສາ້ງອັນຖືກຕອ້ງ(8)ໃຫ້ມີສິດທີໃນການໄປມາຫາສູ່ກັນໄດ້ສະດວກແລະບໍ່ໃຫ້ຣະແວງສົງໃສຊຶ່ງກັນແລະກັນໃຫ້ຖືເປັນເພື້ອນມິດສະຫາຍກັນໄດ້(9)ໃຫ້ມີສິດທີໃນການຕັ້ງຖິ່ນຖານຕາມຕົວເອງແລະຕອ້ງການອັນເປັນທັມ(10)ໃຫ້ມີສິດທີໃນການອື່ນໆອີກທີ່ຖືກຕອ້ງແລະເປັນທັມ

(ຄຳອະທິບາຍ )ທຸກຄົນກໍ່ຮູ້ແກ່ໃຈວ່າສິດເສຣີພາບເຮັດຫຍັງກໍ່ຕອ້ງໄດ້ຕາມໃຈມັກ

ແຕ່ຫາກເກີນຄວາມພໍດີ-ບໍ່ມີກົດໝາຍບັງຄັບບັນຊາ ໂລກນີ້ກໍ່ຈະວຸ້ນວາຍໄປໝົດ ຜູ້ນັ້ນກໍ່ຢາກມີສິດ ຜູ້ນີ້ກໍ່ຢາກມີສິດ ແຕ່ຖ້າມີສິດນອກຂອບເຂດຫາຄວາມພໍດີໄດ້ຍາກ ໂລກນີ້ກໍ່ຈະກາຍເປັນໂລກຂອງໂຈນ ສະນັ້ນພວກເຮົາຄວນໃຫ້ສິດມີຂອບເຂດຢ່າງຖືດຕ້ອງ

6 -ມີປະຊາທິປະໄຕ-ພວກເຮົາຕ້ອງມີປະຊາທິປະໄຕທົ່ວປະເທດ-ໃນທຸກໆກໍຣະນີ ບໍ່ວ່າຈະແມ່ນຊົນຊາດໃດ-ຊົນເຜົ່າໃດແລະທຸກເພດທຸກໄວ ຄວນມີສິດປ່ອນບັດເລືອກເອົາຜູ້ນຳຂອງຕົນ ຂັ້ນຫລຸ່ມຫາຂັ້ນເທິງ ໂດຍເອົາຄະແນນສຽງສ່ວນຫລາຍ ການປົກຄອງຈະມີສອງຣະບົບຄື-ສະພາຕ່ຳໄດ້ແກ່ສະພາປະຊາຊົນແລະສະພາສູງສຸດໄດ້ແກ່ສະພາຣັຖບານ-ການປົກຄອງຈະມີສອງພັກການເມືອງ ຄືມີພັກຝ່າຍຄ້ານແລະຝ່າຍນຳທັງສອງພັກນີ້ຈະຕ້ອງເດີນຕາມເສັ້ນທາງ-ຂອງພັກປະຊາຊົນລາວອິສຣະຍຸກໃໝ່ ໃນທັມມະເພື່ອປະຊາທິປະໄຕ-ຄືເອົາສິນທັມເປັນຫລັກ-ການປົກຄອງຂັ້ນລຸ່ມ ຈາກຂັ້ນບ້ານຫາຂັ້ນແຂວງ ຈະມີການເລືອກຕັ້ງທຸກໆສອງປີແລະການປົກຄອງຂັ້ນເທິງ ຄືນາຍົກຣັຖມົນຕຣີແລະຣັຖມົນຕຣີກະຊວງ ຈະມີການເລືອກຕັ້ງທຸກໆສີ່ປີແລະທຸກໆຣະບົບການປົກຄອງ ດ້ານສັງຄົມເຊັ່ນ-ໃນໂຮງຈັກໂຮງງານ ວິສະຫະກິຈສ່ວນຕົວແລະອື່ນໆ ອີກກໍ່ໃຫ້ມີປະຊາທິປະໄຕຢ່າງຖືກຕ້ອງແລະເປັນທັມ

(ຄຳອະທິບາຍ) ໃນຄຳວ່າປະຊາທິປະໄຕນັ້ນ ຄື ເອົາສຽງສ່ວນຫລາຍຂອງປະຊາຊົນເພື່ອໃຫ້ມີຄວາມຍຸຕິທັມແລະກ້ຳເກິ່ງຕ້ອງມີ-ຫລາຍພັກການເມືອງ ເພື່ອໃຫ້ຖືກໃຈປະຊາຊົນແລະໃຫ້ໄດ້ເລືອກຕາມໃຈມັກຂອງປະຊາຊົນ ສະນັ້ນຈຶ່ງໃຫ້ມີສອງພັກການເມືອງໃຫ່ຽໆ ເພາະວ່າຄົນເຮົາເກີດມາມັກຄົນຣະຢ່າງ ມັກຄົນຣະທາງຫຼືມັກບໍ່ຄືກັນ-ສົມມຸດວ່າມີພັກການເມືອງດຽວ ປະຊາຊົນກຸ່ມໃດກຸມນຶ່ງ ເຂົາເຈົ້າບໍ່ພໍໃຈກໍ່ເກີດຄວາມຂັດແຍ່ງກັນບໍ່ເລີກບໍ່ແລ້ວຈັກເທື່ອ-ປະຊາຊົນທົ່ວປະເທດມັກຝ່າຍໃດ ກໍ່ເລືອກຝ່າຍນັ້ນຕາມໃຈມັກຂອງບຸກຄົນ-ຖ້າຝ່າຍໃດຊະນະຄະແນນສຽງ ກໍ່ປົກຄອງປະເທດຕາມກຳນົດການເວລາ ຖ້າຝ່າຍໃດທີ່ເສັຽໄຊໃນການເລືອກຕັ້ງກໍ່ຄອຍຈັບຕາມອງເປັນຝ່າຍຄ້ານ ໃນການກະທຳທີ່ບໍ່ຖືກຕ້ອງຂອງຣັຖບານປັດຈຸບັນ ຫຼື ໃນຕໍ່ໜ້າຈະມີຝ່າຍໃດຝ່າຍນຶ່ງສະຫລາຽຕົວ ນັ້ນກໍ່ຂຶ້ນກັບຄວາມນິຍົມຊົມຊອບຂອງປະຊາຊົນຜູ້ຕັດສິນຊີ້ຂາດໃນການເລືອກຕັ້ງຂອງພັກການເມືອງນັ້ນ-ອັນນີ້ຈຶ່ງແມ່ນປະຊາທິປະໄຕຢ່າງແທ້ຈິງ-100%

7 -ສິດສເມີພາບ-ພວກເຮົາຕ້ອງມີສິດສເມີພາບກັນ-ບໍ່ວ່າຈະແມ່ນຊົນຊາດໃດຊົນເຜົ່າໃດແລະທຸກເພດທຸກໄວຄວນມີສິດສເມີພາບກັນ-ຣະຫວ່າງຜູ້ຍິງ ຕ້ອງມີສິດທຽບເທົ່າກັບຜູ້ຊາຍ ຜູ້ນ້ອຍມີສິດທຽບເທົ່າກັບຜູ້ໃຫ່ຽໃນທຸກໆກໍຣະນີ ບໍ່

ວ່າດ້ານສິດສ່ວນຕົວຫຼືດ້ານວຽກງານແລະການທຳມາຫາກິນໃນດ້ານປົກຄອງດ້ານເສຖກິດສັງຄົມແລະວັທນະທັມ -ກໍ່ມີສິດທີສເມີພາບເລືອກໄດ້ຕາມໃຈມັກແລະອີງຕາມຄວາມຮູ້ຄວາມສາມາດຂອງຕົນ -ແຕ່ມີຄວາມເຄົາຣົບນັບຖືກັນຕາມຄຸນວຸດທິຫຼືຜູ້ອາວຸໂສ -ພວກເຮົາຄວນມີຄວາມສເມີພາບກັນຢ່າງຖືກຕອ້ງແລະເປັນທັມ

(ຄຳອະທິບາຍ) ພວກເຮົາເກີດມາເປັນມະນຸດຄືກັນ -ບໍ່ວ່າຜູ້ຍິງຫຼືຜູ້ຊາຍເດັກນອ້ຍແລະຜູ້ໃຫ່ຽ ຕາ່ງຊາດຕາ່ງພາສາຕາ່ງຜີວພັນສັນສີຕາ່ງແນວຄິດຈິດໃຈ ແຕ່ບໍ່ຄວນເອົາລັດເອົາປຽບກັນ ຄວນໃຫ້ກຽດແລະສັກສີຂອງຄວາມເປັນມະນຸດ ໃຫ້ມີສິດທີຕໍ່ກັນແລະກັນຕາມສົມຄວນ -ແຕ່ຕອ້ງນັບຖືຕາມຊັ້ນແລະໜາ້ທີ່ ເມື່ອໃຫ້ມີສິດທຽບເທົ່າກັນແລ້ວຈະຕີລວດກວດພຽງບໍ່ໄດ້

8 -ເອກພາບ -ພວກເຮົາຕອ້ງມີຄວາມເປັນເອກພາບກັນ -ບໍ່ວ່າຈະແມ່ນຊົນຊາດໄດຊົນເຜົ່າໄດແລະທຸກເພດທຸກໄວເຮົາຄວນມີເອກພາບກັນ ໂດຍບໍ່ມີການແຍກຊັ້ນວັນນະຜີວພັນສັນສີພວກເຮົາຄວນຕົກລົງເປັນເອກສັນກັນເລືອກເອົາແຕ່ສິ່ງດີໆ ທີ່ມີຄວາມຍຸຕິທັມແກ່ທຸກຄົນບໍ່ວ່າຈະເປັນການປົກຄອງ -ເສຖກິດສັງຄົມແລະວັທນະທັມ -ກໍ່ໃຫ້ມີເອກພາບກັນ ເຊັ່ນ -ດາ້ນພາສາກໍ່ແມ່ນໃຊ້ພາສາກາງຄື ພາສາລາວດັ່ງນີ້ເປັນຕົ້ນ ຢ່າງຖືກຕອ້ງແລະເປັນທັມ

(ຄຳອະທິບາຍ) ພວກເຮົາບໍ່ມີການແຍກຊັ້ນວັນນະ ຫຼື ຜີວພັນສັນສີຫາ່ງມີແລະຈະແມ່ນຄົນໄດມາຈາກໃສ ຖືສາສນາໄດ -ກໍ່ແມ່ນຄົນຄືກັນ ເຖີງຈະມີແນວຄິດຈິດໃຈຕາ່ງກັນ -ພວກເຮົາກໍ່ຄວນຮັບຮູ້ຊຶ່ງກັນແລະກັນແລະຕົກລົງເປັນເອກສັນດວ້ຍຄວາມພິນິສພິຈາຣະນາ ໃຫ້ກ້ຳເກິ່ງທຸກຄົນ ໂດຍມີສິນທັມມະນຸສທັມແລະປະຊາທິປະໄຕເປັນເຄົ້າເທົ້າກ່ອອາວະສານ

9 -ມີເອກຣາຊ -ພວກເຮົາຕອ້ງມີເອກຣາຊແລະອິສຣະພາບຂອງຕົວເອງບໍ່ວ່າຈະແມ່ນຊົນຊາດໄດຊົນເຜົ່າໄດແລະທຸກເພດທຸກໄວພວກເຮົາຕອ້ງປົດແອກເດັກອອກຈາກການເປັນທາດຮັບໃຊ້ຂອງຊາດອື່ນແລະໄດ້ມີສິດທີເປັນເຈົ້າຂອງປະເທດຊາດຢ່າງເຕັມປຽບ ໂດຍບໍ່ເປັນຫົວເມືອງຂຶ້ນຂອງຊາດໄດທີ່ບໍ່ເປັນທັມ ແລະບໍ່ເປັນທາດຮັບໃຊ້ຂອງຕາ່ງປະເທດບໍ່ເອົາຜູ້ໄດມາເປັນເຫຼັ້ງຕີນມືຫຼືທາດຮັບໃຊ້ ບໍ່ຍອມໃຫ້ຕາ່ງຊາດມາຕັ້ງຖານທັບໃນລາວບໍ່ວ່າທາງດາ້ນການເມືອງທາງດາ້ນເສຖກິດແລະວັທນະທັມ ເຮົາກໍ່ມີເອກຣາຊແລະອິສຣະພາບຂອງຕົນເອງ ຢ່າງຖືກຕອ້ງແລະເປັນທັມ

(ຄຳອະທິບາຍ) ການມີອິສຣະພາບ ມີເອກຣາຊຂອງຕົນເອງກໍ່ປຽບສເມືອນປາຢູ່ໃນນ້ຳເຢັນ ບໍ່ມີໃຜມາກົດຂີ່ຂົ່ມເຫງ -ລາວຕອ້ງເປັນລາວຈະເປັນໃຜຜູ້ອື່ນເປັນໄປບໍ່ໄດ້ປະຊາຊົນລາວຖືກກົດຂີ່ຂົ່ມເຫງ ເປັນທາດຂອງຕາ່ງດາ້ວມານານແສນນານ

ປະຊາຊົນລາວມີຄວາມຂົມຂື່ນທໍຣະມານທາງດ້ານຈິດໃຈແລະທາ່ງກາຍທາອັນປຽບ
ບໍ່ໄດ້-ໃນການຕໍ່ສູ້ເອົາເອກຣາຊກໍ່ຍືດເຍື້ອຍາວນານ ຈາກຕາ່ງດ້າວແຕ່ບັນພະບຸຣຸດ
ມາຮອດປັດຈຸບັນ-ກໍ່ຍັງບໍ່ເສັດບໍ່ຊິ້ນ ໃນການເປັນທາດຂອງຕາ່ງດ້າວ ສະນັ້ນພວກ
ເຮົາສົມຄວນທີ່ຈະຍາດເອົາເອກຣາຊ ແລະອິສຣະພາໃນບັ້ນທ້າຍຈາກການຍຶດຄອງ
ຂອງຕາ່ງດ້າວ ໃຫ້ສົມບູນເຕັມໄປດວ້ຍຣະບອບປະຊາທິປະໄຕອັນເປັນທັມ
10-ມີອະທິປະໄຕ-ພວກເຮົາຕອ້ງມີອະທິປະໄຕຂອງຕົວເອງ ບໍ່ວ່າຈະແມ່ນຊົນຊາດ
ໄດຊົນເຜົ່າໄດແລະທຸກເພດທຸກໄວເຮົາຕອ້ງມີຄວາມຍິ່ງໃຫ່ຽປົກປັກຣັກສາ ຊັບສົມ
ບັດຂອງປະເທດທັງໃນໜ້າດິນແລະພື້ນດິນ ແລ້ວຣັກສາທັງກຽດແລະສັກສີຂອງ
ຄວາມເປັນລາວໄວ້-ບໍ່ໃຫ້ໃຜເຂົ້າມາຣົບລູ່ດູ່ມິ່ນປະໝາດລາວ ບໍ່ວາ່ຈະແມ່ນດ້ານ
ການເມືອງ-ດ້ານເສຖກິດສັງຄົມແລະວັທນະທັມທຸກໆປະເທດໃນໂລກ ຕອ້ງນັບຖື
ອະທິປະໄຕຂອງລາວແລະຣັບຮູ້ຣັບປະກັນຄວາມມີສິນທັມແລະຄວາມຍຸຕິທັມຂອງ
ລາວ ເພື່ອຄວາມຍືນຍົງຄົງຕົວຂອງປະເທດລາວຕຣອດໄປ-ໂດຍບໍ່ມີການຣຸກຮານ
ລວ່ງລ້ຳເຂດນ້ຳແດນດິນບໍ່ມີການແຊກແຊງກິຈການພາຍໃນຂອງກັນແລະກັນ ດິນ
ດອນຕອນຫຍ້າທີ່ຖືກຍຶດຄອງຈາກຕາ່ງດ້າວອອ້ມຂ້າງທຸກດ້ານ-ຊາວໂລກຕອ້ງຊວ່ຍ
ແກ້ໄຂໂດຍບໍ່ມີເງື່ອນໄຂ ແລະເມື່ອມີການຣຸກຮານໃນທຸກໆກໍຣະນີ ຊາວໂລກຕອ້ງຊວ່ຍ
ປອ້ງກັນແລະໃຫ້ຄວາມຊວ່ຍເຫລືອແກ່ປະເທດລາວ ຢາ່ງຖືກຕອ້ງແລະເປັນທັມ
(ຄຳອະທິບາຍ) ຍາມໄດຄົນລາວພວກເຮົາກໍ່ບໍ່ຄອ່ຍຈະມີສິດຂອງຕົນເອງໃນການປົກ
ຄອງຣັກສາເຂດນ້ຳແດນດິນແລະຊັບສົມບັດພັຕະຖານກໍ່ເພາະມີກຳລັງອອ່ນແອ ແລະ
ເທກນິກກໍ່ຕ່ຳ ປະຊາຊົນໃນປະເທດມີການສຶກສາບໍ່ຖົ່ວເຖິງແລະຖືກຫລອກລວງໄດ້ງາ່ຍ
ດັ່ງນັ້ນລາວເຮົາຈຶ່ງມີການແຊກແຊງຈາກພາຍນອກບໍ່ວ່າທາງຕົງແລະທາງອອ້ມ ອີກ
ກໍຣະນີນຶ່ງປະເທດລາວບໍ່ມີທາງອອກສູ່ທະເລເພື້ອນບ້ານໄກ້ເຮືອນຄຽງ-ຈຶ່ງຄອຍຂູດເນື້ອ
ເຖືອໜັງ ຂົ່ມເຫງຕາງຕາກເອົາປຽບເອົາລັດຢູ່ສເມີ-ຄວາມຍິ່ງໃຫ່ຽຂອງຄວາມເປັນລາວ
ບໍ່ມີ-ສນັ້ນກໍ່ສົມຄວນແລ້ວທີ່ພວກເຮົາຈະຕື່ນຕົວຕື່ນໃຈ ຣັບຮູ້ຄວາມຍິ່ງໃຫ່ຽຂອງຕົນ
ເພື່ອປົກປັກຣັກສາເຂດນ້ຳແດນດິນແລະກຽດສັກສີ ຂອງລາວໄວ້ຊົ່ວກາຣະນານ
11-ມີອັດຕະສາມະຄີທັມ-ພວກເຮົາຕອ້ງມີຄວາມສາມະຄີປອງດອງຮັກແພງຊວ່ຍເຫລືອ
ຊຶ່ງກັນແລະກັນ ບໍ່ວ່າຈະແມ່ນຊົນຊາດໄດຊົນເຜົ່າໄດແລະທຸກເພດທຸກໄວ ຄວນມີຄວາມ
ສາມະຄີ ສ້າງສາພັທນາປະເທດຊາດໃຫ້ຈະເຣີນຮຸ່ງເຮືອງ ທຽບເທົ່າກັບໂລກທີ່ພັທນາ
ຄື ຕອ້ງສ້າງຖນົນຫົນທາງ-ໂຮງໝໍ ໂຮງຮຽນແລະປັບປຸງ

ຊົນນະບົດຕ່າງໆ ໃຫ້ທົ່ວເຖິງກັນແລະໃຫ້ມີນ້ຳໄຫລໄຟສວ່າງບໍ່ວ່າຈະເປັນດ້ານປົກຄອງ-ດ້ານເສຖກິດດ້ານສັງຄົມແລະວັທນະທັມ ກໍ່ບຸກເບີກດ້ວຍເຮື່ອແຮງແລະນ້ຳໃຈອັນບໍຣິສຸດທັງສະຖານທີ່ສາທາຣະນະແລະສ່ວນຕົວ ກໍ່ໃຫ້ມີຄວາມສະອາດງາມຕາຂອງຊາວໂລກແລະເປັນຣະບຽບຮຽບຮອ້ຽຢ່າງຖືກຕ້ອງແລະເປັນທັມ

(ຄຳອະທິບາຍ) ຄວາມສາມະຄີປອງດອງເປັນບໍ່ເກີດຂອງຄວາມຈະເຣີນຂອງຊາດເຮັດຫຍັງກໍ່ຕ້ອງມີຄວາມສາມະຄີ ທຸ້ມເທເຮື່ອແຮງວັດຖຸແລະຈິດໃຈ-ສ້າງສາພັທນາປະເທດຊາດ ດ້ວຍຄວາມບາກບັ່ນບໍ່ວ່າຈະເປັນຂອງສາທາຣະນະແລະສ່ວນຕົວກໍ່ຕ້ອງສາມະຄີປອງດອງກັນແລ້ວປັບປຸງເສຖກິດພື້ນຖານຄື-ເຄື່ອງອຸປໂພກບໍຣິໂພກ ຂອງລາວເຮັດລາວໄຊ້ ລາວໄດ້ ລາວຕ້ອງຈະເຣີນ-ບໍ່ຫວັງຄອງຄອຍຖ້າແຕ່ຊາດອື່ນ ມາສ້າງສາປະເທດໃຫ້ເຮົາ-ຄົນລາວເຮົາມີຄວາມສາມະຄີເປັນອັນນຶ່ງອັນດຽວກັນ ກໍ່ສາມາດສ້າງປະເທດໃຫ້ຈະເຣີນຮຸ່ງເຮືອງທຽບກັບ ໂລກອື່ນໄດ້ຢ່າງສະບາຍ ບໍ່ວ່າຈະສ້າງປະເທດທໍ່ນີ້ ແມ່ນມີອຸປສັກຢ່າງອື່ນກໍ່ເອົາຕົວລອດໄດ້ຍອ້ນຄວາມສາມະຄີ ຄວາມສາມະຄີ ຄື ການຂຍາຍແນວຄິດວິວັທນາການຕໍ່ ຄືອ້າຍຮູ້ສອງນອ້ງຮູ່ນຶ່ງ ເອົາເຂົ້າປະກອບກັນຈຶ່ງຈະສຳເຣັດໄດ້ ຖ້າມີຄົນດຽວສ້າງຊາດອາດຈະບໍ່ຈະເຣີນໄດ້

12-ມີຄວາມເອື້ອເຝື້ອ-ພວກເຮົາຕ້ອງມີນ້ຳໃຈເອື້ອເຝື້ອເຜື່ອແຜ່ຕໍ່ກັນແລະກັນ ບໍ່ວ່າຈະແມ່ນຊົນຊາດໄດຊົນເຜົ່າໄດແລະທຸກເພດທຸກໄວ-ຄວນມີນ້ຳໃຈໄມຕຣີຕິດແທບເປັນເພື່ອນມິດທີ່ດີຊວ່ຍເຫລືອຊຶ່ງກັນແລະກັນດວ້ຍຄວາມບໍຣິສຸດຜຸດຜ່ອງ ຂຶ້ນເຮືອນໄຕ້ໃຫ້ໄດ້ເກືອມາກິນ ຂຶ້ນເຮືອນເໜືອໃຫ້ໄດ້ເຂົ້າ ທັງຄວາມເວົ້າໃຫ້ຄອ່ງກັນ ຍາມຂັດສົນຈົນໃຈມີເຫດຮ້າຍຫຼືໄພທຳມະຊາດກໍ່ຊວ່ຍກັນ-ເຊັ່ນນ້ຳຖວ້ມ ແຜ່ນດິນໄຫວໄຟໃໝ້ ລົມພະຍຸ-ດັ່ງນີ້ເປັນຕົ້ນພວກເຮົາຄວນມີຄວາມເອື້ອເຝື້ອເຜື່ອແຜ່ບໍຣິຈາກຊັບສົມບັດປັດໃຈທັງສີ່ ມີ ຄື ທີ່ຢູ່ອາໃສເຄື່ອງນຸ່ງຫົ່ມຢາປົວພະຍາດແລະອາຫານການກິນຈາກນວ່ຍປະຊາສົງເຄາະຫຼືສວ່ນບຸກຄົນແກ່ເພື່ອນມະນຸດດວ້ຍກັນ ຢ່າງຖືກຕອ້ງແລະເປັນທັມ

(ຄຳອະທິບາຍ) ປະຊາຊົນລາວທົ່ວປະເທດມີນິໄສໃຈຄໍ-ໂອມອອ້ມອາລີ ມີນ້ຳໃຈເອື້ອເຝື້ອເຜື່ອແຜ່ ຕໍ່ສູ້ເພື່ອນມະນຸດແລະສັດທັງຫລາຍ-ເປັນຄົນບໍ່ຂີ້ຕະນີ່ ມີນ້ຳໃຈໄມຕຣີມັກງ່າຍແລະເອົາໃຈຄົນອື່ນ-ບໍ່ມັກບຽດບຽນໄຜ ຄົນລາວເຮົາສວ່ນຫລາຍ ຖືສາສນາພຸທ-ໄດ້ພາກັນປະຕິບັດຮີດຄອງປະເພນີຢ່າງເຄ່ງຄັດ ເພື່ອບໍ່ໃຫ້ຣະເລີງແລະເສື່ອມເສັຽຄວາມງາມຂອງວັທນະທັມລາວ-ລາວພວກເຮົາຄວນຊວ່ຍກັນຮັກສາໄວ້ຕຣອດກາລະນານ (-ຂໍ້ນີ້ໝາຍເຖິງປັດໃຈສີ່ )

13-ມີກັມມະບົດສິບ --ພວກເຮົາຄວນມີການຢັບຢັ້ງທາງກາຍທາງວາຈາແລະໃຈ
ເພື່ອບໍ່ຣະເມີດສິດທິມະນຸດ ອັນຈະເກີດການທະເລາະວິວາດໃນທຸກແຫ່ງຫົນ
ໃນສັງຄົມ ເຮົາຄວນມີ ຄື

1-ກາຍສຸຈຣິດ-ບໍ່ມີການຂ້າຟັນລັດແທງ ທໍາຣາຍຣ່າງກາຍກັນ ມະນຸດຜູ້ໃດທີ່ເຂົ້າມາ
ເມືອງລາວແລ້ວ ຄໍາວ່າຕາຍບໍ່ມີ-ມີແຕ່ຄວາມປອດໄພໃຫ້ຄວາມເປັນທັມທຸກປະການ
ບໍ່ມີການລັກຊັບສົມບັດຂອງພວກອື່ນ ຫຼືບໍ່ມີການປຸ້ນຈີ້ກັນນັບແຕ່ຂອງຕົກເຮັ່ຽເສັ່ຽ
ຫາຍ ໃນກາງທາງກໍ່ບໍ່ເກັບເອົາມາເປັນຂອງຕົນເອງ ໃຫ້ມີນໍ້າໃຈໃສສະອາດບໍຣິສຸດ
ບໍ່ມີການຫລີ້ນຊູ້ຊູເມັຽທ່ານຫຼືຜົວຄົນອື່ນ ອັນຜິດຮີດຄອງປະເພນີບໍ່ມີເສບເມຖຸນ
ລື່ມສຸຣາເມໄລຈົນເກີນໄປ ບໍ່ມີຄ້າຂາຍຂອງເຖື່ອນ
ຫຼື ອົ່ມຍືນສໍາເລົາແລະຂາຍຕົວເປັນໂສເພນີ

2-ວາຈີສຸຈະຣິດ-ບໍ່ມີການເວົ້າຕົວະດອກລວງ ຍົວະຍົງສົ່ງເສີມທໍາລາຍຂອງຜູ້ອື່ນໃຫ້
ຫຼົ້ມຈົມບໍ່ມີການເວົ້າໃສ່ ສັບສໍ່ສຽດສີ ຫຼືເວົ້າຂວັນນິນທາກາເລ ລັບຫລັງ
ບໍ່ມີການເວົ້າ ຄໍາຫຍາບຊ້າດ່າປອັຽແຊ່ງເວນ ບໍ່ມີການເວົ້າ
ຄໍາເປີ້ຍເຈີ້ຍ ຖະເໝລງແປງຄວາມ

3-ມະໂນສຸຈຣິດ-ບໍ່ມີຄວາມຄິດ ໂລບມາກໂລພາຢາກໄດ້ຈົນເກີນໄປ ບໍ່ມີຄວາມຄິດ
ປອງຮ້າຍ ບຽດບຽນແກ່ທຸກໆຊີວິດ-ບໍ່ວ່າມະນຸດແລະສັດໃຫ້ມີຄວາມເຫັນຊອບ
ຕາມທໍານອງຄອງທັມ ທຸກປະການ

(ຄໍາອະທິບາຍ) ສໍາລັບກໍາມະບົດສິບນີ້-ປະກອບດວ້ຍສິນຫ້າແລະການປະຕິບັດທາງ
ກາຍແລະໃຈ ອັນຈະນໍາພາຄົນຊົ່ວ-ກາຍມາເປັນຄົນດີແລະປະເທດຊາດຂອງລາວເຮົາ
ກໍ່ຈະກາຍມາເປັນແຜ່ນດິນທັມແລະເປັນແບບຢ່າງຂອງໂລກ ນີ້ຄື(ເສັ້ນທາງສູ່ສວັນ-)

14-ມີພົມວິຫານ-ພວກເຮົາຄວນມີພົມວິຫານ ສີ່-ປະຈໍາໃຈດັ່ງນີ້ ຄື
-ມີຄວາມເມດຕາ-ມີຄວາມຮັກໃຄ່ປາຖນາສັນຕິສຸຂ ແກ່ທຸກຊີວິດ
ເຮັດໃຫ້ໂລກນີ້ ມີຄວາມອົບອຸ່ນຮົ່ມເຢັນຕຣອດການລະນານ
-ຄືມີຄວາມກະຣຸນາ-ມີຄວາມສົງສານ ເອັນດູກູນາແກ່ທຸກໆຊີວິດໃນໂລກ
-ຄືມີມຸທິຕາ-ມີຄວາມຍິນດີຊື່ນຊົມ ຕໍ່ຄວາມສໍາເຮັດຂອງຄົນອື່ນຢ່າງບໍຣິສຸດ
-ຄືມີອຸເປກຂາ-ມີຄວາມວາງໃຈເປັນກາງເສີຍ-ເຫັນທຸກສິ່ງຢ່າງເປັນທັມະດາ

(ຄໍາອະທິບາຍ) ສໍາລັບຂໍ້ພົມວິຫານສີ່ນີ້-ເຮັດໃຫ້ມະນຸດເຮົາມີຄວາມຮັກທໍ່ໃນສັງຄົມທົ່ວໄປ
ວາງໃຈເປັນທັມະດາ ບໍ່ມີຄວາມອິດສາຣິສຍາ-ຖ້າພວກເຮົາພາກັນປະຕິບັດໃຫ້ເຖິງໃຫ້ໄດ້-

ໂລກນີ້ຈະແຈ່ມໃສ ກາຍເປັນໂລກພົມໃນແດນມະນຸດ -ນີ້ຄື (ເສັ້ນທາງສູ່ຊັ້ນພຣົມ

15 -ມີອະຣິຍະສັດສີ່ -ພວກເຮົາຄວນຮູ້ວິທີດັບທຸກເພື່ອກ້າວເຂົ້າສູ່ວິປັສນາຍານ ຄື

-ຖ້າມີທຸກ -ຄືຄວາມບໍ່ສະບາຍກາຍມີຄວາມເດືອດຮ້ອນໃຈ ທຸກເພາະເກີດດັບບໍ່
ສົມຫວັງ ໄດ້ພັດພາກຈາກຄົນຮັກແລະຂອງຊອບໃຈແລະທຸກ -ເພາະມີທາດຂັນ

-ມີສະມຸທັຍຍະ -ຄືເຫດທີ່ເກີດຈາກທຸກຍອັນຄວາມຢາກມີຢາກເປັນຢາກໃນກາມະຄຸນ

-ມີນິໂຣທະ -ຄືຄວາມທຸກ ກຳຈັດຕັນຫາໃຫ້ຊິ້ນໄປ ຈິດສງົບວ່າງກິເດດແລະນິວອນ

-ມີມັຄຄະ -ຄືຂໍ້ປະຕິບັດໃຫ້ເຖິງຄວາມດັບທຸກ ມີສີນສະມາທິແລະປັນຍາແລະ
ມັຄຄະມີອົງແປດປະການ ຕາມທາງສາຍກາງມັດສິມາປະຖິປະທາ ຄື

-ສັມມາທິດຖິ -ປັນຍາເຫັນຊອບ ວິປັສນາຍານ ຄືສັດຮູ້ອະຣິຍະສັຕສີ່

-ສັມມາສັງກັບປະ -ດຳຣິຊອບຄິດຫລີກຈາກການມະຣົມ
ອະໄພບໍ່ຈອ່ງຮ້າຍ -ບໍ່ຄິດໃຫ້ຜູ້ອື່ນເດືອດຮອ້ນ

-ສັມມາວາຈາ -ເຈຣະຈາຊອບ ເວົ້າຈິງອອ່ນຫວານ ມີໄມຕຣີ

-ສັມມາກັມມັນຕະ -ການທຳງານຊອບ ເວັ້ນຈາກການເປັນໂຈນທຳຣາຍຄົນອື່ນ

-ສັມມາອາຊີວະ -ລຽ້ງຊີບຊອບ ເວັ້ນມີວິຊາຊີບ ຜິດກົດໝາຍ

-ສັມມາວາຍາມະ -ພຽນຊອບ ພະຍາຍາມລະອະກຸສົນ ລະຄວາມຊົ່ວ
ແລະພະຍາຍາມ ບຳເພັນບຸນ ແລະສີນທັມ

-ສັມມາສະຕິ -ລະລຶກຊອບ ຄຸມສະຕິສຳຣວມໃຈ ຢູ່ສເມີ

-ສັມມາສະມາທິ -ຕັ້ງໃຈໄວ້ຊອບ ຄືຈະເຣີນຍານສີ່

(ຄຳອະທິບາຍ) ສຳລັບຂໍ້ນີ້ ມີອົງແປດປະການຊຶ່ງເປັນຫົນທາງການປະຕິບັດໃຫ້ສອດຄອ່ງ ກັບການຄອງຊີບປະຈຳວັນແລະເປັນຫົນທາງແຫ່ງຄວາມດັບທຸກຂອງມວນມະນຸດທັງຫລາຍ -ບໍ່ວ່າຈະດັບທາງກາຍແລະທາງໃຈກໍ່ດີເຜີ່ນແຕ່ ພຣະພຸທເຈົ້າ ກໍ່ໄຊ້ຂໍ້ນີ້ເປັນການປະຕິບັດ ເພື່ອວິມຸດຕິ ຄື ຄວາມຫລຸດພົ້ນຈາກການມີຄວາມທຸກ
ນັ້ນເອງ -ນີ້ຄື (ເສັ້ນທາງສູ່ພຣະນິພານ)

16 -ມີສັນຕິສຸກຖາວອນ -ປະເທດລາວເມື່ອຊີ້ນການຂັດແຍ່ງທາງດ້ານການເມືອງແລະສັງຄົມ -ກໍ່ຄືຄວາມເຂົ້າໃຈຂອງຄົນໃນຊາດປາຖນາແຕ່ຄວາມຢູ່ເຢັນເປັນສຸກບໍ່ຢາກຈະຂ້າຟັນລັດແຫງແຊງດີແຊງເດ່ນກັນ -ບໍ່ຢາກຈະເປັນໂຈນໃຈໂຫດຫຽ້ມໂຈລະກັມປຸ້ນຈີ້ບໍ່ຢາກເປັນຄົນອັຕະພານລັກຊັບຂ້າເຈົ້າເອົາຂອງຂົ່ມຂືນສຳເລົາບໍ່ມີເອົາປຽບເອົາຣັດກັນບໍ່ຢ້ານລື່ນຢ້ານເຫລືອກັນ ບໍ່ມີມົນທິນໃນໃຈ ບໍ່ຢ້ານໃຜ

ຈະມາຂ້າ-ບໍ່ປ້ານວ່າໃຜຈະມາລັກຂອງຫຼືປຸ້ນຈີ້ ປະຊາຊົນລາວ ທົ່ວທັງປະເທດບໍ່ວ່າຈະ ແມ່ນຊົນຊາດໃດ-ຊົນເຜົ່າໃດແລະທຸກເພດທຸກໄວ-ກໍ່ຢູ່ທ່າງນອນຕາຫຼັບເຕັມນ່ອຍ-ມີ ຄວາມປີ້ມປີຕິຍິນດີໃນຊີວິດຈິດໃຈ-ມີແຕ່ຄວາມເບີກບານມີແຕ່ຄວາມມ່ວນຊື່ນແລະໄປ ມາຫາຊູ່ສະດວກຊຶ່ງກັນແລະກັນໄປພຸ້ນໄດ້ກິນປາມາພີ້ໄດ້ກິນເຂົ້າ-ຂຶ້ນເຮືອນໄຕ້ໄດ້ເກືອ ຂຶ້ນເຮືອນເໜືອໄດ້ເຂົ້າ-ພອ້ມຄວາມເວົ້າບໍ່ໝ່າຍກັນ ມີຄວາມເອື້ອເຟື້ອເພື່ອແຜ່-ແລະໄປ ປຮັ້ມປາມຖາມຂ່າວໃນຄວາມສຸກທຸກບໍ່ຄຸກຄາມໃນດ້ານຈິດໃຈຂອງເພື້ອນຝູງແລະປ້າລູງ ທັງພີ່ນອ້ງຢູ່ທຸກໆສະຖານທີ່ທົ່ວປະເທດ ຈະຕອ້ງມີຄວາມສງົບສຸກປັສຈາກຄວາມຊົ່ວຮ້າຍ ທັງປວງກໍ່ຍອ້ນພວກເຮົາມີສິນທັມປະຈໍາໃຈຊອກສແວງຫາທັມມະເຂົ້າຕົວແລະກໍ່ບໍ່ທໍາ ຊົ່ວເພາະກົວບາບນີ້ເຫລະ-ນໍ້າໃຈຄົນລາວຫາໃສຈະທຽບທັນຄັນພວກເຮົາບໍ່ຊ່ວຍກັນປະ ຕິບັດ-ຕາມທີ່ໄດ້ກ່າວມາໃນຂ້າງເທິງນີ້ສັນຕິສຸກຖາວອນ ກໍ່ເກີດຂື້ນງ່າຍດາຍແທ້ເລີ

ຈຸດປະສົງຂອງພັກປະຊາຊົນລາວອິສຣະຍຸກໃໝ່ໃນທັມມະ
ປະຊາທິປະໄຕ-ຂ້າພະເຈົ້າຂໍຖືຄໍາວ່າ ຄື

1- ເພື່ອລາວຮ່ວມລາວ ໃຫ້ໄດ້ເອກະຣາຊ ສົມບູນແລະປະກາດຣະບອບລາວຍຸກໃໝ່ ໃນທັມມະ ປະຊາທິປະໄຕທົ່ວປະເທດ ໃຫ້ຊາວໂລກຮັບຮູ້
2-ເພື່ອດຶກຕົວ ຈາກການເປັນຫົວເມືອງຂື້ນແບບໃໝ່ຂອງຈັກະພັດທັງຫລາຍ
3-ເພື່ອໃຫ້ປະເທດລາວຂອງເຮົາ ເປັນປະເທດທີ່ມີປະສິດທິພາບໃນດ້ານທັມມະ-ຫຼືຍຸດ ຕິທັມເໜືອໂລກ ໂດຍບໍ່ມີໃຜເໝືອນແລະບໍ່ເໝືອນໃຜ-ຊຶ່ງຈະເດີນຕາມເສັ້ນທາງຂອງ -ອົງພຣະສັມມາສັມພຸທເຈົ້າ-ບໍ່ເຄັ່ງຈົ່ນເກີນໄປແລະບໍ່ຍານຈົ່ນເກີນໄປຢູ່ໃນຖ້າມກາງ
4-ເພື່ອສ້າງປະເທດລາວໃຫ້ມີຄວາມຈະເຣີນຮຸ່ງເຮືອງທັງສອງດ້ານຄືດ້ານວັດຖຸແລະຈິດໃຈ
5-ເພື່ອສັນຕິສຸກຖາວອນ ຂອງປະຊາຊົນລາວແລະຊາວໂລກທຸກຖ້ວນໜ້າ ໃນອະນາຄົດ
6-ເພື່ອເປັນແບບຢ່າງທີ່ດີ ໃຫ້ແກ່ຊາວໂລກແລະສັນຕິພາບຂອງໂລກ ໃນອະນາຄົດດວ້ຍຣິດ ພຣະທັມ

ໝາຍເຫດພັກປະຊາຊົນລາວອິສຣະຍຸກໃໝ່ຍັງມີໂຄງການ
ສ້າງຊາດໃຫ້ຈະເຣີນຮຸ່ງເຮືອງເກືອບ-100-ໂຄງການ
ແຕ່ຂໍສງວນໄວ້ຈົ່ນກົ່ວຈະຮອດວັນນັ້ນ-ສິນທັມຕອ້ງຊະນະອະທັມ
ພັກປະຊາຊົນລາວອິສຣະຍຸກໃໝ່ໃນທັມມະປະຊາທິປະໄຕ

ສູນກາງ ສັນພູໝອກ ທີ່ນະຄອນວຽງຈັນ ວັນທີ-25-7-00
ໃນນາມພັກປະຊາຊົນລາວອິສຣະ